**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

ແຂວງວຽງຈັນ

ພະແນກສາທາລະນະສຸກ

ເລກທີ 1923 /ສທຂ.ວຈ

ລົງວັນທີ 11.6.2026

# ຫນັງສືເຊີນເຂົ້າຮ່ວມປະມູນ

**ອີງຕາມ:** ໜັງສືແຈ້ງການພະແນກການເງິນແຂວງວຽງຈັນ, ສະບັບເລກທີ 166/ກງຂ.ວຈ, ລົງວັນທີ 10 ກຸມພາ 2026 ກ່ຽວກັບການລົງທຶນຂອງລັດປະຈໍາປີ 2026 ຂອງວຽງຈັນຄັ້ງທີ 1 ສໍາລັບໂຄງການ ລົງທຶນບ້ວງຕ່າງໆ ທີ່ສະພາແຫ່ງຊາດຮັບຮອງ.

**ອີງຕາມ:** ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາ, ກອງເລຂາຊ່ວຍວຽກຄຸ້ມຄອງໂຄງການກໍ່ສ້າງ - ສ້ອມແປງພື້ນຖານໂຄງລ່າງ(ລະບົບນໍ້າລິນ) ຈໍານວນ 6 ໂຄງການຢູ່ 3 ເມືອງ(ກາສີ,ວັງວຽງ ແລະ ຫີນເຫີບ) ແຂວງວຽງຈັນ ໂດຍການລົງທຶນຂອງລັດ(ໂຄງການສະເໜີໃຫມ່ ບ້ວງພື້ນຟູໄພພິບັດ ປີ 2026), ເລກທີ 457/ຄປຂ.ວຈ, ລົງວັນ 30 ເມສາ 2026.

**ອີງຕາມ:** ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ພະແນກສາທາລະນະສຸກແຂວງເປັນຜູ້ຈັດຕັ້ງປະຕິບັດໂຄງການກໍ່ສ້າງ - ສ້ອມແປງພື້ນຖານໂຄງລ່າງ(ລະບົບນໍ້າລິນ) ຈໍານວນ 6 ໂຄງການຢູ່ 3 ເມືອງ(ກາສີ,ວັງວຽງ ແລະ ຫີນເຫີບ) ແຂວງວຽງຈັນ ໂດຍການລົງທຶນຂອງລັດ(ໂຄງການສະເໜີໃຫມ່ ບ້ວງພື້ນຟູໄພພິບັດ ປີ 2026), ເລກທີ 615/ຄປຂ.ວຈ, ລົງວັນທີ 8 ມິຖຸນາ 2026.

1. ພະແນກສາທາລະນະສຸກແຂວງວຽງຈັນ ຊຶ່ງໄດ້ຮັບງົບປະມານການລົງທຶນຂອງລັດປະຈໍາປີ 2026 ຂອງແຂວງວຽງຈັນ; ຂໍເຊີນບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິເຫມາະສົມເຂົ້າຊື້ຊອງປະມູນໂຄງການກໍ່ສ້າງ - ສ້ອມແປງພື້ນຖານໂຄງລ່າງ(ລະບົບນໍ້າລິນ) ຈໍານວນ 6 ໂຄງການຢູ່ 3 ເມືອງ(ກາສີ,ວັງວຽງ ແລະ ຫີນເຫີບ) ແຂວງວຽງຈັນ ໂດຍການລົງທຶນຂອງລັດ(ໂຄງການສະເໜີໃຫມ່ ບ້ວງພື້ນຟູໄພພິບັດ ປີ 2026) ຊຶ່ງປະກອບມີ 6 ໂຄງການດັ່ງນີ້:
    1. ໂຄງການກໍ່ສ້າງ ແລະ ສ້ອມແປງນໍ້າລິນ ບ້ານຫີນໂງ່ນ ເມືອງກາສີ ແຂວງວຽງຈັນ.
    2. ໂຄງການກໍ່ສ້າງ ແລະ ສ້ອມແປງລະບົບນໍ້າລິນບ້ານນໍ້າແປກ ເມືອງກາສີ ແຂວງວຽງຈັນ
    3. ໂຄງການກໍ່ສ້າງ ແລະ ສ້ອມແປງລະບົບນໍ້າລິນບ້ານນາເລົາ ເມືອງວັງວຽງ ແຂວງວຽງຈັນ
    4. ໂຄງການກໍ່ສ້າງ ແລະ ສ້ອມແປງລະບົບນໍ້າລິນບ້ານໂພນແກ້ວ ເມືອງວັງວຽງ ແຂວງວຽງຈັນ
    5. ໂຄງການກໍ່ສ້າງ ແລະ ສ້ອມແປງລະບົບນໍ້າລິນບ້ານນາກາງ ເມືອງຫີນເຫີບ ແຂວງວຽງຈັນ
    6. ໂຄງການກໍ່ສ້າງ ແລະ ສ້ອມແປງລະບົບນໍ້າລິນບ້ານນາອັນ ເມືອງຫີນເຫີບ ແຂວງວຽງຈັນ
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ

สแกนด้วย CamScanner

ປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ຜູ້ເຂົ້າຮ່ວມປະມູນຈະຕ້ອງໄດ້ກະກຽມເອກະສານປະມູນສະບັບຕົ້ນ 1 ຊຸດ ແລະ ສະບັບກອບປີ້ 1 ຊຸດ ເຊິ່ງແຕ່ລະຊຸດໃຫ້ຂຽນລະບຸລະອຽດວ່າ: "ສະບັບຕົ້ນ" ແລະ "ສະບັບກອບປີ້" ຫຼັງຈາກນັ້ນໃຫ້ໃສ່ໃນຊອງປະມູນດຽວກັນ

4. ການປະມູນນີ້ອະນຸຍາດໃຫ້ບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຂັ້ນ 1 ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ .

5. ບໍລິສັດທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກສາທາລະນະສຸກແຂວງວຽງຈັນ (ຫ້ອງການນ້ຳສະອາດ) ຊື່: ດຣ ນາລິນ ພັນທະວົງ, ໂທ 55695337, ເວລາ 8 ໂມງ 30 ນາທີ -16 ໂມງ 00 ນາທີ. ເລີ່ມແຕ່ ວັນທີ 12/6/2026-15/7/2026 ໃນໂມງລັດຖະການ, ລາຄາເອກະສານຊອງປະມູນ 1,000,000 ກີບ/ໂຄງການ.

6. ທຸກໆ ຊອງປະມູນຕ້ອງມີໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

7. ບໍລິສັດຜູ້ປະມູນຕ້ອງມີປະສົບການໃນການກໍ່ສ້າງຢ່າງໜ້ອຍ 3 ປີ, ມີ 1 ສັນຍາ ການກໍ່ສ້າງທີ່ຄ້າຍຄື, ໃບເສຍອາກອນປີ 2025, ມີໃບອະນຸຍາດດຳເນີນທຸລະກິດ 2026.

8. ຊອງປະມູນຕ້ອງສົ່ງໃນເວລາ ຫລື ກ່ອນເວລາ ເວລາ 9 ໂມງ 00 ນາທີ , ວັນທີ 15/7/2026 ທີ່ພະແນກສາທາລະນະສຸກແຂວງ(ຫ້ອງການນ້ຳສະອາດ, ທີ່ຖະໜົນ 13 ເໜືອ, ບ້ານໂພນສີໄຄ, ເມືອງໂພນໂຮງ ແຂວງວຽງຈັນ). ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ການເປີດຊອງປະມູນຈະໄດ້ເປີດໃນເວລາ 9 ໂມງ 30 ນາທີ, ວັນທີ 15/7/2026 ທີ່ ພະແນກສາທາລະນະສຸກແຂວງ(ຕຶກນ້ຳສະອາດ, ຊັ້ນ 2, ທີ່ຖະໜົນ 13 ເໜືອ, ບ້ານໂພນສີໄຄ, ເມືອງໂພນໂຮງ ແຂວງວຽງຈັນ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

**ຫົວໜ້າພະແນກ**

ເຊັນແທນ

ພະແນກສາທາລະນະສຸກ ແຂວງວຽງຈັນ

ດຣ. ນ. ອະໄລລັກ ຂາວແກ້ວປະເສີດ

สแกนด้วย CamScanner